ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫັວດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ສປປລາວ

ເລກທີ 0194 /ຫຄຊກລ.ຄພ
ນະຄອນຫລວງວຽງຈັນ, ວັນທີ 02 MAR 2023

# ບົດລາຍງານ

ຮຽນ: ທ່ານ ຫົວໜ້າຫ້ອງການ ຄຊກລ

ເລື່ອງ: ຜົນການຕິດຕາມ ກວດກາ ແລະ ຄວບຄຸມຄຸນນະພາບ ອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI) ທີ່ເມືອງຫົວເມືອງ ແຂວງ ຫົວພັນ.

## i. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ ຄຊກລ ເລກທີ 112/ຫຄຊກລ, ລົງວັນທີ 06 ກຸມພາ 2023, ອະນຸມັດໃຫ້ປະຕິບັດຕິດຕາມ ກວດກາ ອົງການເພື່ອມະນຸດສະທຳ ແລະ ມີສ່ວນຮ່ວມ ວຽກງານສຳຫຼວດ, ກວດກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ, ລະຫວ່າງວັນທີ 06 ຫາ 13 ກຸມພາ 2023 ເຊິ່ງອົງການໄດ້ປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ທີ່ເຊັນຮ່ວມກັບລັດຖະບານ ສປປ ລາວ. ການເຄື່ອນໄຫວຕິດຕາມ ກວດກາຄັ້ງນີ້ປະກອບມີຄະນະທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ, ຄຄກລ ແຂວງ ຫົວພັນ ແລະ ພະນັກງານວິຊາການ ອົງການ Hi ເຂົ້າຮ່ວມ ລາຍລະອຽດຊື່ຄະນະກວດກາມີລະອຽດດັ່ງລຸ່ມນີ້:

## ii. ຄະນະທີມງານກວດກາ

1. ທ່ານ ບຸນນານ ລັດຕະນະວົງ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
2. ທ່ານ ພູວົງ ສີສະໜັກ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
3. ທ່ານ ສອນໄຊ ພົມມະທຳ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
4. ທ່ານ ຕຸ້ຍ ໄຊຍະສານ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
5. ທ່ານ ວົງແສງ ສີສຸລິດ, ວິຊາການຄຸ້ມຄອງຄຸນນະພາບ;
6. ທ່ານ ວົງສັກດາ ແກ້ວຈູມສີ, ວິຊາການ, ຄຄກລ ແຂວງ ຫົວພັນ;

ພາກສ່ວນອົງການ Hi.

1. ທ່ານ ປາສຸພາບ ມຸກດາລາ, ຜູ້ປະສານງານຂອງອົງການ Hi ຂັ້ນແຂວງ;
2. ທ່ານ ປີນາ ສີບຸນເຮືອງ ວິຊາການທຳລາຍລະເບີດຂັ້ນສູງ, ຮອງຫົວໜ້າປະສານງານ ປະຈຳອົງການ Hi ເມືອງຫົວເມືອງ ແຂວງ ຫົວພັນ;
3. ທ່ານ ນ ວາດສະໜາ ເທບວົງສາ, ຫົວໜ້າແພດ ປະຈຳອົງການ Hi.

## iii. ຈຸດປະສົງ

ຕິດຕາມ ແລະ ກວດກາ ການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ລະເບີດ ຂອງນັກວິຊາການ ການບໍລິຫານຄຸ້ມຄອງບັນຊາ ແລະ ສັງເກດທາງດ້ານເຕັກນິກການປະຕິບັດງານເກັບກູ້ລະເບີດ, ທຳລາຍລະເບີດ

ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ຊຸກຍູ້ ປັບປຸງການປະຕິບັດງານ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບ ເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

1) **ການເຄື່ອນໄຫວຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ**

ບົດບັນທຶກຄວາມເຂົ້າໃຈເຊັນຮ່ວມລະຫວ່າງລັດຖະບານ ແລະ ອົງການເກັບກູ້ລະເບີດເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ເລີ່ມແຕ່ມື້ອະນຸມັດ 29 ກໍລະກົດ 2021 ຫາ 31 ສິງຫາ 2023 ເຊິ່ງມີກິດຈະກຳ NTS, TS , AC, Roving, VA, MRE ແລະ ກິດຈະກຳສ້າງຄວາມອາດສາມາດໃຫ້ພະນັກງານທ້ອງຖິ່ນ. ນຳໃຊ້ທຶນຂອງກະຊວງການຕ່າງປະເທດ, ປະເທດໂຮນລັງ.

2) **ພະນັກງານຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະການມີສ່ວນຮ່ວມ ທີ່ເມືອງຫົວເມືອງ**

ປັດຈຸບັນພະນັກງານປະຈຳຢູ່ເມືອງ ຫົວເມືອງ ທັງໝົດມີຈຳນວນ 71 ຄົນ, ຍິງ 27 ຄົນ. ຊ່ຽວຊານຕ່າງປະເທດ 01 ຄົນ ເຊິ່ງປະກອບມີ ໜ່ວຍງານບໍລິຫານ 11 ຄົນ ຍິງ 02 ຄົນ, ໜ່ວຍງານເກັບກູ້ລະເບີດ 43 ຄົນ, ພະນັກງານຂັບລົດ 06 ຄົນ, ໜ່ວຍງານຂໍ້ມູນຂ່າວສານ ຊຸມຊົນ 02 ຄົນ ຍິງ 01 ຄົນ, ວິຊາການຂັ້ນ 01 ມີ 18 ຄົນ, ຍິງ 11 ຄົນ, ວິຊາການຂັ້ນ 2 ມີ 02 ຄົນ, ຍິງ 01, ວິຊາການຂັ້ນ 3 ມີ 03 ຄົນ, ຍິງ 01 ຄົນ, ວິຊາການຂັ້ນ 04 ມີ 02 ຄົນ ລາວ 01 ຄົນ, ແພດ 05 ຄົນ, ຍິງ 04 ຄົນ, ສຳຫຼວດບໍ່ແມ່ນວິຊາການ 02 ຄົນ, ສຳຫຼວດດ້ານວິຊາການ 08 ຄົນ, ຕ່າງປະເທດ 01 ຄົນ, ໄປປະຈຳການທີ່ແຂວງຜົ້ງສາລີ 12 ຄົນ, ໃນນີ້ປະກອບມີ ທີມງານສຳຫຼວດດ້ານວິຊາການ, ທີມງານຂໍ້ມູນຂ່າວສານຊຸມຊົນ, ທີມງານກວດກູ້ ແລະ ທີມງານທຳລາຍລະເບີດເຄື່ອນທີ່, ນອກນີ້ ໜ່ວຍງານຂໍ້ມູນ ຍັງເຮັດໜ້າທີ່ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ແລະ ພ້ອມທັງເຮັດວຽກສຳຫຼວດບໍ່ແມ່ນວິຊາການ, ພະນັກງານທັງໝົດຂອງອົງການແມ່ນໄດ້ຮັບການຝຶກອົບຮົມ ໂດຍອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ.

3) **ຕິດຕາມສະໜາມສຳຫຼວດດ້ານວິຊາການ, ກວດກູ້, ທຳລາຍລະເບີດ ແລະ ຄວບຄຸມຄຸນນະພາບ.**

ລົງຕິດຕາມສະໜາມສຳຫຼວດດ້ານວິຊາການ ທີ່ບ້ານ ຖັງຖາວ ເມືອງຫົວເມືອງ ຈຳນວນຄົນໃນທີມງານລວມ 11 ຄົນ ເລີ່ມເຮັດວຽກ 31 ມັງກອນ 2023 ຈຳນວນຜູ້ໄດ້ຮັບຜົນປະໂຫຍດ 1,725, ຍິງ 826, ຊາຍ 899. ການປະຕິບັດໜ້າທີ່ເຫັນວ່າ ມີແຜນຮອງຮັບອຸປະຕິເຫດ, ນຳໃຊ້ເຕັກນິກວິທີການກວດແບບໂຕເສັສ ທັງຫຼັກທິດທາງ ຕາມມາດຕະຖານການປະຕິບັດງານກຳນົດ ເພື່ອຊອກຄົ້ນຫາ ລບຕ ລູກຫວ່ານ, ໃນສະໜາມນີ້ພົບຫຼັກຖານ ປະເພດບົມບີ 26 ຈຳນວນ 32 ໜ່ວຍ ແລະ ມີການທຳລາຍລະເບີດທີ່ພົບ ໃນທຸກໆທ້າຍຊົ່ວໂມງຈະຕ້ອງໄດ້ທຳລາຍລະເບີດໃຫ້ສຳເລັດ.

ຕິດຕາມການທຳລາຍລະເບີດບົມບີ 26 ຈຳນວນ 01 ໜ່ວຍ ຂອງທີມງານສຳຫຼວດດ້ານວິຊາການ ໃນດ້ານຫຼັກການ ແລະ ວິທີການເຫັນວ່າເຮັດໄດ້ດີເປັນຕົ້ນ: ການຄຸ້ມຄອງທາດລະເບີດ, ການວາງແຜນ ເພື່ອທຳລາຍລະເບີດ, ການວາງຈຸດຍາມ, ຈຸດຍິງ, ແບບວາງທາດລະເບີດ, ການຕໍ່ແກັບເຂົ້າວົງຈອນ, ໄລຍະຫ່າງຄວາມປອດໄພ ແລະ ສຳເລັດທຳລາຍ ຈະລໍຖ້າ 24 ຊົ່ວໂມງຈຶ່ງກັບມາກວດຈຸດນີ້ຕາມາດຕະຖານຂອງອົງການ.

4) **ການເກັບກູ້ລະເບີດບໍ່ທັນແຕກ**

ຢ້ຽມຢາມສະໜາມກວດກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ບ້ານ ຜານາງ ID: 705003 CL, AC, 183. ເນື້ອທີ່ກະສິກຳ (ສວນ) ເລີ້ມວັນທີ 31 ມັງກອນ 2023, ຄາດຄະເນຈະສຳເລັດ 21 ເມສາ 2023, ທີມງານມີຈຳນວນຄົນ 15 ຄົນ, ວິຊາການເກັບກູ້ 09 ຄົນ ເຊິ່ງມີເນື້ອທີ່ຈຳນວນ 97,500 $m^2$ ຜູ້ໄດ້ຮັບຜົນປະໂຫຍດ 05 ຄອບຄົວ, 40 ຄົນ, ຍິງ 19 ຄົນ, ຮອດວັນທີ 10 ກຸມພາ 2023 ກວດກູ້ໄດ້ຈຳນວນ 6,825 ຕາແມັດ ສະໜາມນີ້ພົບສະ

ເກັດຫຼາຍ ແລະ ບົມບີກໍ່ຫຼາຍ ໃນວັນທີ 14 ກຸມພາ 2023 ຈະໂຈະ ເຮັດເປັນບົດລາຍງານບ່ອນທີ່ກວດແລ້ວ ຈະຍ້າຍໄປກວດກູ້ສະໜາມໃໝ່ ຍ້ອນວ່າຈະເລັ່ງໃຫ້ບັນລຸແຜນຕາມ MOU, ການປະຕິບັດກວດກູ້ເຮັດໄດ້ສະເລ່ຍຈຳນວນເນື້ອທີ່ 100 ຕາແມັດ ຕໍ່ຄົນ ຕໍ່ມື້, ເຕັກນິກການກວດກູ້ແມ່ນນຳໃຊ້ 01 ຄົນ ທັງກວດທັງຈົ້ມ ແລະ ປະກອບມີ: ການສະໜັບສະໜູນດ້ານການແພດ, ການບັນຊາສະໜາມ, ລະບົບການສື່ສານການ, ປັກໝາຍສະໜາມເກັບກູ້, ເອກະສານປະຈຳສະໜາມ, ພະຫະນະນຳສົ່ງຄົນເຈັບ ແລະ ອຸປະກອນການແພດ. ການເກັບກູ້ລະເບີດໄດ້ປະຕິບັດຕາມລະບຽບ ແລະ ຂັ້ນຕອນການກວດກູ້ (ໄດ້ມີການທົດສອບເຄື່ອງກວດກັບລະເບີດເປົ້າໝາຍໃນຄວາມເລິກ 25 ຊັງຕີແມັດ), ການໝາຍ ລບຕ ທີ່ກວດພົບ, ສະໜາມນີ້ນຳໃຊ້ເຄື່ອງກວດຫຍີ່ຫໍ້ MineLab F3s ແລະ L. ການຄວບຄຸມຄຸນນະພາບພາຍໃນຫົວໜ້າທີມງານ 15% EOD3, 20% EOD2 ຄືວິທີ ພາຍຫຼັງວິຊາການເກັບກູ້ກວດສຳເລັດ 05 ເລນ ຂອງບັອກນັ້ນ ຫົວໜ້າທີມຈຶ່ງກວດຄືນ (QC) ແລະ ວິຊາການຂັ້ນ 4 ຈະກວດ 2% ຂອງຫົວໜ້າທີມງານສຳເລັດ 01 ສະໜາມນີ້.

ອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ເຮັດວຽກຕິດຕໍ່ກັນ 9 ວັນ, ພັກ 2 ວັນ ຄື ວັນເສົາ ແລະ ວັນອາທິດ ແລະ ເຮັດວຽກຕໍ່ເນື່ອງກັນ 80 ຫຼື 81 ວັນ ຂຶ້ນກັບຈຳນວນວັນເຮັດວຽກຕົວຈິງພາຍໃນເດືອນ ແລະ ພັກວຽກ 30 ວັນ.

**5) ຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ**

ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ (QC) ທັງໝົດ 05 ສະໜາມມີເນື້ອທີ່ຈຳນວນ 122, 188 m² ແລະ ເນື້ອທີ່ QC 2% ທັງໝົດຈຳນວນ 3,750 m² ເທົ່າກັບ 2,443 %, ເຮັດຕົວຈິງໄດ້ 3,06% ລື່ນຄາດໝາຍ. ເຊິ່ງມີລາຍລະອຽດສະໜາມ QC ດັ່ງລຸ່ມນີ້:

1. ບ້ານນາແລ້ງ HI-AC-2022-0705046 -178, S= 36,250 m², QC%= 1,250 m² (25 m x 25 m) 2 Boxs;
2. ບ້ານນາສາມ Hi-AC- 2022-0705084 -172, S= 18,750 m², QC%= 625 m² (25 m x 25 m) 1 Box;
3. ບ້ານາສາມ Hi-AC- 2022-0705084 -177, S= 19,688 m², QC%= 625 m² (25 m x 25 m) 1 Box;
4. ບ້ານນາເກງ HI-AC- 2022-0705085 –179, S= 22,500 m², QC%= 625 m² (25 m x 25 m) 1 Box;
5. ບ້ານແວກ HI-AC- 2022-0705086 –171, S= 25,000 m², QC%= 625 m² (25 m x 25 m) 1 Box;

**iv. ສະຫຼຸບຜົນຂອງການກວດກາ**

ຜ່ານການຕິດຕາມ ກວດກາສະໜາມກວດກູ້, ຄວບຄຸມຄຸນນະພາບ ແລະ ທຳລາຍລະເບີດ ທີ່ກຳລັງປະຕິບັດງານຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ປະຈຳເມືອງຫົວເມືອງ ແຂວງ ຫົວພັນ ບັນດາທີມງານປະຕິບັດຕາມມາດຕະຖານການປະຕິບັດງານ (SOPs) ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ ສະຫຼຸບໄດ້ດັ່ງນີ້:

**1. ຈຸດດີ**

- ບັນດາເອກະສານປະຈຳສະໜາມ ບົດບັນທຶກການທົດສອບເຄື່ອງກວດປະຈຳວັນ, ບັນທຶກໝວດເລືອດ, ອຸປະກອນການແພດ, ອາການແພ້ຕ່າງໆຂອງພະນັກງານ, ບັນທຶກຕິດຕາມ ກວດກາຂອງ SEOD, ບົດບັນທຶກແຂກເຂົ້າຢ້ຽມຢາມ ແລະ ອື່ນໆ.
- ລະບົບການສື່ສານຮັບໃຊ້ໄດ້ເປັນປົກກະຕິ ລະບົບສັນຍານຄື້ນສັ້ນ ແລະ ໂທລະສັບມືຖື.
- ຖ້າກວດພົບລະເບີດບົມບີ ທີມງານຈະຕ້ອງໄດ້ທຳລາຍໃນທ້າຍຊົ່ວໂມງເຮັດວຽກຂອງມື້ນັ້ນ ທຸກໆຄັ້ງ.
- ພະຫະນະຮັບໃຊ້ທີມງານພາກສະໜາມພຽງພໍ.
- ມີເອກະສານຄວບຄຸມຄຸນນະພາບພາຍໃນ (QC) ຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ.

- ກວດກາ ຄວບຄຸມຄຸນນະພາບ ຂອງອົງການເກັບກູ້ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ປະຈຳເມືອງທົ່ວເມືອງ ແຂວງ ທົ່ວພັນ ປະຕິບັດດັ່ງນີ້ ຫົວໜ້າ ທີມງານປະຕິບັດ 15% ແລະ ຜູ້ຊ່ວຍທີມ 20% ໃນລັອກທີ່ສຳເລັດແລ້ວ ເພື່ອໃຫ້ປອດລະເບີດບໍ່ທັນແຕກຕົກຄ້າງ.
- ຂໍ້ຄົງຄ້າງຜ່ານມາ ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມໄດ້ຮັບການປັບປຸງແກ້ໄຂແລ້ວ.
- ການທຳລາຍ ລບຕ ຂອງທີມງານສຳຫຼວດ ແລະ ທຳລາຍເຄື່ອນທີ່ ປະຕິບັດວຽກໄດ້ດີຫຼາຍ, ມີຄວາມປອດໄພ ແລະ ຖືກຕ້ອງຕາມລະບຽບການ ທີ່ສອດກັບມາດຕະຖານແຫ່ງຊາດ .
- ລົງຄວບຄຸມຄຸນນະພາບ ສະໜາມທີ່ກວດກູ້ສຳເລັດແລ້ວ ມີ 05 ສະໜາມ ໃນຂໍ້ 5 ຂ້າງເທິງສະໜາມດັ່ງກ່າວເຫັນວ່າມີຄວາມປອດໄພ ບໍ່ພົບຊິ້ນສ່ວນສະເກັດທີ່ໃຫຍ່ກ່ວາມາດຕະຖານແຫ່ງຊາດກຳນົດໄວ້ເຄິ່ງໜຶ່ງຂອງບົມບີ 26 (1/2 BLU 26).

2. ຂໍ້ຄົງຄ້າງ

- ນຳໃຊ້ປອກຄໍຊ່ວຍຄົນເຈັບບໍ່ຖືກເຕັກນິກ.
- ການທຳລາຍທຸກຄັ້ງຄວນປະຕິບັດຕາມບົດຮຽນການທຳລາຍເຊັ່ນວ່າ ຈ່າຍສາຍຍິງບໍ່ຖືກຫຼັກການ.

ຫົວໜ້າຫ້ອງການ ຄຊກລ

ໜ່ວຍງານຄຸ້ມຄອງຄຸນນະພາບ

ວິລສາ.

ໃຈນແຍງ ແພງທອງສະຫວັດ

ບ່ອນນຳສົ່ງ:
- ຄຄກລ ແຂວງ ທົ່ວພັນ "ເພື່ອລາຍງານ"
- ອົງການເກັບກູ້ລະເບີດ HI ນະຄອນຫຼວງວຽງຈັນ ແລະ HI ປະຈຳ ເມືອງທົ່ວເມືອງ ແຂວງ ທົ່ວພັນ "ເພື່ອປະຕິບັດ"
- ຫ້ອງການ ຄຊກລ ເກັບມ້ຽນ